ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ
Land learning Initiative for Food security Enhancement Project (LIFE Project)



# ຝຶກອົບຮົມແບບໃກ້ຊິດ ຫົວຂໍ້: ການມີສ່ວນຮ່ວມຂອງຍິງ-ຊາຍ ຕໍ່ກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## ທ່ານຈະຮຽນຮູ້ຫຍັງແດ່?

- ໄດ້ຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບບົດບາດຍິງ-ຊາຍໃນວຽກງານຕ່າງໆ, ການມີສ່ວນຮ່ວມໃນວຽກງານຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ;
- ພັດທະນາທັກສະຂອງທ່ານໃນການວິເຄາະການມີສ່ວນຮ່ວມຂອງຍິງ-ຊາຍ ໂດຍການນຳໃຊ້ເຄື່ອງມືວິເຄາະທີ່ໜ້າສົນໃຈ ແລະ ເຂົ້າໃຈເຖິງຄວາມລະອຽດອ່ອນຂອງເພດຍິງໃນການມີສ່ວນຮ່ວມປະກອບຄຳຄິດເຫັນໃນດ້ານຕ່າງໆ;
- ຮຽນຮູ້ ມາດຕາກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຍິງ-ຊາຍ ໃນຫຼາຍໆດ້ານເຊັ່ນ: ກົດໝາຍວ່າດ້ວຍ ຄວາມສະເໝີພາບຍິງ-ຊາຍ, ກົດໝາຍແຮງງານ, ຍຸດທະສາດການເຕີບໂຕສີຂຽວ, ຍຸດທະສາດປ່າໄມ້ ແລະ ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.




## ວາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ:

- 3 ວັນ ຝຶກກ່ຽວກັບ ການເປັນຄູຝຶກ ແລະ ທິດສະດີດ້ານກົດໝາຍ;
- 1 ວັນ ໃນການກະກຽມ, ຝຶກຊ້ອມ ແລະ ສະເໜີຫົວຂໍ້ຕ່າງໆ ແລະ ວາງແຜນລົງບ້ານ(ຄູຝຶກແນະນຳໃນການຝຶກຊ້ອມ ແລະ ການວາງແຜນ);
- 1 ວັນ ສຳລັບ ຝຶກທົດລອງຢູ່ຂັ້ນບ້ານ ແລະ ປະເມີນຜົນຮ່ວມກັນ.

## ວິທີການດຳເນີນງານມີແນວໃດແດ່?

- *ເຕັກນິກວິທີການຮຽນຮູ້ແບບມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;*
- *ຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ, ມີຄວາມຮູ້ດ້ານກົດໝາຍ ແລະ ມີປະສົບການເຮັດວຽກນຳຊຸມຊົນ;*
- *ເຄື່ອງມືປະກອບດ້ວຍ: ແຜນບົດສອນ, ວິທີການທີ່ຫຼາກຫຼາຍ ແລະ ອຸປະກອນ.*

## ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ສິດສະເໝີພາບຍິງ-ຊາຍ ໃນດ້ານຕ່າງໆ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການມີສ່ວນຮ່ວມຂອງຍິງ-ຊາຍ;
- ການມີສ່ວນຮ່ວມຂອງຍິງ-ຊາຍ ຕໍ່ກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ;
- ການມີສ່ວນຮ່ວມຂອງຍິງ-ຊາຍ ຕໍ່ກັບການຂຶ້ນທະບຽນທີ່ດິນ;
- ສິດຂອງແມ່ຍິງໃນການມີຊື່ໃນໃບຕາດິນ;
- ສາເຫດທີ່ພາໃຫ້ແມ່ຍິງເສຍສິດໃນການມີຊື່ໃນໃບຕາດິນ ແລະ ວິທີປ້ອງກັນ;
- ການມີສ່ວນຮ່ວມຂອງຍິງ-ຊາຍຕໍ່ກັບການໃຫ້ເຊົ່າ ແລະ ສຳປະທານທີ່ດິນ.

## ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

*ກ່ອນຝຶກອົບຮົມແບບໃກ້ຊິດ:*

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດ ໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ**: ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານ ຫຼື ຈາກຄູ່ຮ່ວມງານທ້ອງຖິ່ນ ໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ**: ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ**: ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານ ທີ່ອົງກອນຂອງທ່ານ ວາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

*ພາຍຫຼັງຝຶກອົບຮົມແບບໃກ້ຊິດ:*

- ແຈ້ງໃຫ້ໂຄງການໄລຟ໌ຮັບຮູ້ ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org